ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍກຳມະບານ ທຫລ.ຊຂ ຮ່ວມຂະບວນການອອກແຮງງານອະນາໄມລວມ




ໃນຕອນເຊົ້າຂອງ ວັນທີ 30 ມັງກອນ 2020 ໜ່ວຍກຳມະບານ ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງ ຊຽງຂວາງ ໄດ້ເຂົ້າຮ່ວມຂະບວນການອອກແຮງງານອະນາໄມລວມ, ຕາມເສັ້ນທາງຫຼວງໃນເທດສະບານ ໃຫ້ກຽດເຂົ້າຮ່ວມນຳພາຂະບວນການຂອງ ສະຫາຍ ນາງ ອຸທອນ ມາສີຊົມໄຊ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານແຂວງ ຊຽງຂວາງ ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງ ສະຫະພັນກຳມະບານລາວ ຄົບຮອບ 64 ປີ (01 ກຸມພາ 1956 – 01 ກຸມພາ 2020), ງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ທີ່ ແຂວງ ຊຽງຂວາງ ເປັນເຈົ້າພາບ ແລະ ງານສະເຫຼີມສະຫຼອງພິທີຮັບທົ່ງໄຫຫີນເຂົ້າເປັນມໍລະດົກໂລກທີ່ຈະມາເຖິງນີ້.

ເຊິ່ງຂະບວນການອອກແຮງງານໃນຄັ້ງນີ້ ໜ່ວຍກຳມະບານ ທຫລ.ຊຂ ຮ່ວມກັບບັນດາກຳມະບານຮາກຖານ-ໜ່ວຍພະແນກການອ້ອມຂ້າງແຂວງ, ບັນດາທະນາຄານທຸລະກິດລັດ ໄດ້ຮັບຜິດຊອບອະນາໄມ

ເລີ່ມ 4 ແຍກໄຟອຳນາດທະນາຄານພັດທະນາລາວ ໄປຕາມຖະໜົນເມືອງພວນ ຮອດ 3 ແຍກ ຕົ້ນພູຜາແດງ ລ້ຽວຂວາໄປຕາມຖະໜົນປັດໃຈ ຮອດສວນສາທາລະນະອ່າງນ້ຳຫງ່ຳ ລ້ຽວຂວາໄປຕາມເສັ້ນທາງເລກ 1D ຮອດ 4 ແຍກໄຟອຳນາດ ລັດວິສາຫະກິດໄຟຟ້າລາວ ສາຂາຊຽງຂວາງ ລ້ຽວຂວາໄປຕາມຖະໜົນເມືອງພວນຮອດອານຸສາວະລີ ທ່ານ ພູມີ ວົງວິຈິດ; ແຕ່ລະພາກສ່ວນຮັບຜິດຊອບອະນາໄມ ໄດ້ພ້ອມກັນເອົາໃຈໃສ່ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ມີປະສິດທິຜົນ ແລະ ມີຄວາມຮັບຜິດຊອບສູງ ໃນການອະນາໄມ, ຕາມສາຍທາງຫຼວງ, ຕໍ່ໜ້າເຮືອນ, ສຳນັກງານ, ຫ້ອງການ ແລະ ດິນເປົ່າຫວ່າງ ໃຫ້ມີຄວາມສະອາດງາມຕາ.







ຫຼັງຈາກນັ້ນ, ຄະນະຮັບຜິດຊອບຈາກສະຫະພັນກຳມະບານແຂວງຊຽງຂວາງ, ພະແນກສາທາລະນະສຸກແຂວງ, ອພບຕ ລົງກວດກາຂະບວນການອະນາໄມດັ່ງກ່າວ ເພື່ອການເກັບມ້ຽນຂີ້ເຫຍື້ອຕາມຈຸດອະນາໄມຕ່າງໆ ໄປຖິ້ມບ່ອນທີ່ກຳນົດໄວ້ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ ແລະ ຈົບງາມ.

ຂ່າວ : ສຸກສະຫວັນ ພິມມະວົງ